ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 2507 /ປທສ

ນະຄອນຫຼວງວຽງຈັນ, ວັນທີ: 22 AUG 2016

# ຂໍ້ຕົກລົງ
# ວ່າດ້ວຍການສື່ສານຜ່ານດາວທຽມ

- ອີງຕາມ ກົດໝາຍວ່າດ້ວຍການໂທລະຄົມມະນາຄົມສະບັບປັບປຸງ ເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ດຳລັດຂອງທ່ານນາຍົກລັດຖະມົນຕີແຫ່ງສປປລາວ, ສະບັບເລກທີ 303/ນຍ, ລົງວັນທີ 26 ກໍລະກົດ 2011, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
- ອີງຕາມ ດຳລັດຂອງລັດຖະບານ ວ່າດ້ວຍຄື້ນຄວາມຖີ່ ສະບັບເລກທີ 60/ລບ ລົງວັນທີ 03 ກຸມພາ 2014;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ປທສ ສະບັບເລກທີ່ 2654/ປທສ, ລົງວັນທີ 13 ຕຸລາ 2015, ວ່າດ້ວຍ ແຜນຜັງຄື້ນຄວາມຖີ່ແຫ່ງຊາດ.

**ລັດຖະມົນຕີກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການນຳໃຊ້ການສື່ສານຜ່ານດາວທຽມ ເພື່ອໃຫ້ມີຄວາມເປັນເອກະພາບກັນໃນທົ່ວປະເທດ, ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ ຮັບປະກັນຄວາມໝັ້ນຄົງ, ຄວາມປອດໄພຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2 ການສື່ສານຜ່ານດາວທຽມ

ການສື່ສານຜ່ານດາວທຽມ ແມ່ນເຕັກໂນໂລຊີການສື່ສານແບບບໍ່ມີສາຍປະເພດໜຶ່ງໂດຍນຳໃຊ້ຄື້ນຄວາມຖີ່ສື່ສານເພື່ອຮັບ-ສົ່ງສັນຍານສຽງ, ພາບ ແລະ ຂໍ້ມູນຂ່າວສານ ລະຫວ່າງໜຶ່ງ ຫຼື ຫຼາຍສະຖານີພາກພື້ນດິນ ແລະ ໜ່ວຍດາວທຽມ.

### ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

3.1. ດາວທຽມ (Satellite) ໝາຍເຖິງ ສິ່ງປະດິດທີ່ມະນຸດສ້າງຂຶ້ນ ແລະ ມີວົງໂຄຈອນປິ່ນອ້ອມໜ່ວຍໂລກ ເພື່ອນໍາໃຊ້ເຂົ້າໃນການສື່ສານ ແລະ ອື່ນໆ;

3.2. ສະຖານີພາກພື້ນດິນ (Earth station) ໝາຍເຖິງ ສະຖານີທີ່ຕິດຕັ້ງຢູ່ເທິງໜ້າໂລກ ຫຼື ຊັ້ນບັນຍາກາດຂອງໂລກເຊັ່ນ: ເຮືອບິນ, ບາລູນ ເພື່ອນໍາໃຊ້ສໍາລັບການຕິດຕໍ່ສື່ສານກັບໜຶ່ງ ຫຼື ຫຼາຍໜ່ວຍດາວທຽມ;

3.3. ສະຖານີເຄື່ອນທີ່ພາກພື້ນດິນ (Mobile Earth station) ໝາຍເຖິງ ສະຖານີພາກພື້ນດິນທີ່ສາມາດເຄື່ອນທີ່ ແລະ ຕິດຕໍ່ສື່ສານກັບດາວທຽມໃນເວລາດຽວກັນ ຢູ່ທຸກໆຈຸດທີ່ມີສັນຍານດາວທຽມ;

3.4. ອຸປະກອນສື່ສານຜ່ານດາວທຽມ ໝາຍເຖິງ ອຸປະກອນທີ່ນໍາໃຊ້ໃນການຮັບ, ການສົ່ງ ຫຼື ທັງຮັບທັງສົ່ງສັນຍານ, ຂໍ້ມູນຂ່າວສານ, ຕົວໜັງສື, ສຽງ ແລະ ຮູບພາບໂດຍການນໍາໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວ ທຽມ ເປັນຕົ້ນ ໂທລະພາບເຂົ້າສູ່ເຮືອນໂດຍກົງ (DTH), ອຸປະກອນສື່ສານຜ່ານດາວທຽມປາຍທາງຂະໜາດນ້ອຍ (VSAT);

3.5. ການສື່ສານ ໝາຍເຖິງ ການຮັບ ຫຼື ສົ່ງ ແລະ ທັງຮັບ ທັງສົ່ງຂໍ້ມູນໂດຍການນໍາໃຊ້ຄື້ນຄວາມຖີ່ສື່ສານ;

3.6. ຄື້ນຄວາມຖີ່ສື່ສານຜ່ານດາວທຽມ ໝາຍເຖິງ ຄື້ນແມ່ເຫຼັກໄຟຟ້າທີ່ກະຈາຍໃນອາກາດ ແລະ ອາວະກາດ ເຊິ່ງມີຍ່ານ ຄວາມຖີ່ແຕ່ 3 GHz ເຖິງ 31 GHz ທີ່ນໍາໃຊ້ເຂົ້າໃນການໂທລະຄົມມະນາຄົມ ແລະ ການສື່ສານ.

### ມາດຕາ 4 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນໍາໃຊ້ການສື່ສານຜ່ານດາວທຽມ ຢູ່ ສປປ ລາວ.

## ໝວດທີ 2
## ຄື້ນຄວາມຖີ່ສື່ສານ ແລະ ປະເພດການບໍລິການສື່ສານຜ່ານດາວທຽມ

### ມາດຕາ 5 ການຈັດສັນຄື້ນຄວາມຖີ່ສໍາລັບການສື່ສານຜ່ານດາວທຽມ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຈັດສັນ, ຈັດແບ່ງ, ອະນຸຍາດໃຫ້ນໍາໃຊ້ ແລະ ເກັບຄືນຄື້ນຄວາມຖີ່ສື່ສານຜ່ານດາວທຽມຢູ່ ສປປ ລາວ ໂດຍປະຕິບັດຕາມແຜນຜັງຄື້ນຄວາມຖີ່ແຫ່ງຊາດ, ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຍ່ານຄວາມຖີ່ສື່ສານ**

ຍ່ານຄວາມຖີ່ສື່ສານຜ່ານດາວທຽມ ທີ່ນຳໃຊ້ຢູ່ ສປປ ລາວ ມີດັ່ງນີ້:

6.1. ຍ່ານຄວາມຖີ່ສື່ສານ C;

6.2. ຍ່ານຄວາມຖີ່ສື່ສານ Ku;

6.3. ຍ່ານຄວາມຖີ່ສື່ສານ Ka;

6.4. ຍ່ານຄວາມຖີ່ສື່ສານຜ່ານດາວທຽມອື່ນຕາມທີ່ໄດ້ກຳນົດໄວ້ໃນແຜນຜັງຄື້ນຄວາມຖີ່ແຫ່ງຊາດທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 7 ຍ່ານຄວາມຖີ່ສື່ສານ C**

ຍ່ານຄວາມຖີ່ສື່ສານ C ປະກອບມີແຖບຄວາມຖີ່ຂາຂຶ້ນ ແລະ ແຖບຄວາມຖີ່ຂາລົງ. ແຖບຄວາມຖີ່ຂາລົງຂະໜາດແຕ່ສາມຈຸດສີ່ ເຖິງສີ່ຈຸດສອງຈິກາເຮີດ (3.4– 4.2 GHz) ແລະ ແຖບຄວາມຖີ່ຂາຂຶ້ນມີຂະໜາດແຕ່ຫ້າຈຸດແປດຫ້າສູນ ເຖິງ ຫົກຈຸດເຈັດສອງຫ້າຈິກາເຮີດ (5.85 – 6.725 GHz).

**ມາດຕາ 8 ຍ່ານຄວາມຖີ່ສື່ສານ Ku**

ຍ່ານຄວາມຖີ່ Ku ປະກອບມີແຖບຄວາມຖີ່ຂາຂຶ້ນ ແລະ ແຖບຄວາມຖີ່ຂາລົງ. ແຖບຄວາມຖີ່ຂາລົງມີຂະໜາດແຕ່ສິບສາມຈຸດເຈັດຫ້າ ເຖິງ ສິບສີ່ຈຸດຫ້າສູນຈິກາເຮີດ (13.75 – 14.50 GHz) ແລະ ແຖບຄວາມຖີ່ຂາຂຶ້ນຂະໜາດແຕ່ສິບຈຸດເກົ້າແປດ ເຖິງສິບເອັດຈຸດສອງສູນຈິກາເຮີດ (10.98 – 11.20 GHz), ສິບເອັດຈຸດສີ່ຫ້າ ເຖິງສິບເອັດຈຸດເຈັດສູນຈິກາເຮີດ (11.45 – 11.70 GHz) ແລະ ສິບສອງຈຸດສອງສູນ ເຖິງສິບສອງຈຸດເຈັດຫ້າຈິກາເຮີດ (12.20 – 12.75 GHz).

**ມາດຕາ 9 ຍ່ານຄວາມຖີ່ສື່ສານ Ka**

ຍ່ານຄວາມຖີ່ Ka ປະກອບມີແຖບຄວາມຖີ່ຂາຂຶ້ນ ແລະ ແຖບຄວາມຖີ່ຂາລົງ. ແຖບຄວາມຖີ່ຂາລົງມີຂະໜາດແຕ່ສິບເຈັດຈຸດເຈັດສູນ ເຖິງ ຊາວເອັດຈຸດສອງສູນຈິກາເຮີດ (17.70 – 21.20 GHz) ແລະ ແຖບຄວາມຖີ່ຂາຂຶ້ນຂະໜາດແຕ່ຊາວເຈັດຈຸດຫ້າສູນ ເຖິງສາມສິບເອັດຈຸດສູນຈິກາເຮີດ (27.50 – 31.00 GHz).

**ມາດຕາ 10 ປະເພດການບໍລິການສື່ສານຜ່ານດາວທຽມ**

ການບໍລິການສື່ສານຜ່ານດາວທຽມຢູ່ ສປປ ລາວ ມີ 4 ປະເພດຕົ້ນຕໍ ດັ່ງນີ້:

10.1. ການບໍລິການສື່ສານຜ່ານດາວທຽມແບບປະຈຳທີ່ (Fixed Satellite Service);

10.2. ການບໍລິການວິທະຍຸກະຈາຍສຽງ ແລະ ໂທລະພາບຜ່ານດາວທຽມ (Broadcasting Satellite Service);

10.3. ການບໍລິການສື່ສານຜ່ານດາວທຽມແບບເຄື່ອນທີ່ (Mobile Satellite Service);

10.4. ການບໍລິການຄື້ນຄວາມຖີ່ເພື່ອກວດກາ ແລະ ຄົ້ນຫາ (Radiodetermination service);

### ມາດຕາ 11 ການບໍລິການສື່ສານຜ່ານດາວທຽມແບບປະຈຳທີ່

ການບໍລິການສື່ສານຜ່ານດາວທຽມແບບປະຈຳທີ່ (Fixed Satellite Service) ແມ່ນການຮັບ-ສົ່ງຄື້ນຄວາມຖີ່ສື່ສານຜ່ານດາວທຽມລະຫວ່າງໜຶ່ງ ຫຼື ຫຼາຍສະຖານີພາກພື້ນດິນແບບປະຈຳທີ່ໂດຍຜ່ານດາວທຽມ.

### ມາດຕາ 12 ການບໍລິການວິທະຍຸກະຈາຍສຽງ ແລະ ໂທລະພາບຜ່ານດາວທຽມ

ການບໍລິການວິທະຍຸກະຈາຍສຽງ ແລະ ໂທລະພາບຜ່ານດາວທຽມ (Broadcasting Satellite Service) ແມ່ນການສົ່ງ ຫຼື ຖ່າຍທອດສັນຍານລາຍການວິທະຍຸ ແລະ ໂທລະພາບຜ່ານດາວທຽມເພື່ອໃຫ້ປະຊາຊົນທົ່ວໄປສາມາດຮັບຟັງ ແລະ ຮັບຊົມລາຍການດັ່ງກ່າວໄດ້ໂດຍກົງ.

### ມາດຕາ 13 ການບໍລິການສື່ສານຜ່ານດາວທຽມແບບເຄື່ອນທີ່

ການບໍລິການສື່ສານຜ່ານດາວທຽມແບບເຄື່ອນທີ່ (Mobile Satellite Service) ແມ່ນການຮັບ-ສົ່ງຄື້ນຄວາມຖີ່ສື່ສານລະຫວ່າງສະຖານີເຄື່ອນທີ່ພາກພື້ນດິນ ແລະ ໜຶ່ງ ຫຼື ຫຼາຍດາວທຽມ ຫຼື ລະຫວ່າງບັນດາດາວທຽມນຳກັນ.

### ມາດຕາ 14 ການບໍລິການຄື້ນຄວາມຖີ່ເພື່ອກວດກາ ແລະ ຄົ້ນຫາ

ການບໍລິການຄື້ນຄວາມຖີ່ສື່ສານເພື່ອກວດກາ ແລະ ຄົ້ນຫາ (Radiodetermination service) ແມ່ນການນຳໃຊ້ຄື້ນຄວາມຖີ່ສື່ສານເພື່ອຈຸດປະສົງກວດກາວັດຖຸ ແລະ ຄົ້ນຫາຈຸດທີ່ຕັ້ງ, ຄວາມໄວ ແລະ ຄຸນລັກສະນະຂອງເປົ້າໝາຍ.

## ໝວດທີ 3
## ການອະນຸຍາດນຳໃຊ້ການສື່ສານຜ່ານດາວທຽມ

### ມາດຕາ 15 ການຂໍອະນຸຍາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຕ້ອງການນຳໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວທຽມ, ດຳເນີນທຸລະກິດໃຫ້ບໍລິການສື່ສານຜ່ານດາວທຽມ, ນຳເຂົ້າ-ອອກ ແລະ ຕິດຕັ້ງອຸປະກອນສື່ສານຜ່ານດາວທຽມຕ້ອງຂໍອະນຸຍາດຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຕາມເງື່ອນໄຂທີ່ລະບຸໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 16 ເງື່ອນໄຂການອະນຸຍາດ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວທຽມ, ດຳເນີນທຸລະກິດໃຫ້ບໍລິການສື່ສານຜ່ານດາວທຽມ ແລະ ນຳເຂົ້າ-ຕິດຕັ້ງອຸປະກອນສື່ສານຜ່ານດາວທຽມຕາມເງື່ອນໄຂດັ່ງນີ້:

4.

16.1. ປະກອບຄໍາຮ້ອງ ຕາມແບບພິມສໍາລັບແຕ່ລະປະເພດການອະນຸຍາດສະເພາະຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

16.2. ສອດຄ່ອງກັບນະໂຍບາຍດ້ານຄື້ນຄວາມຖີ່, ແຜນຜັງຄື້ນຄວາມຖີ່ແຫ່ງຊາດ, ລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ;

16.3. ສອດຄ່ອງກັບນະໂຍບາຍລວມສູນລະບົບສື່ສານຜ່ານສູນອິນເຕີເນັດແຫ່ງຊາດ;

16.4. ມີແຜນນໍາໃຊ້, ພັດທະນາ ແລະ ແຜນການດໍາເນີນກິດຈະການຂອງຕົນຢ່າງຈະແຈ້ງ;

16.5. ມີໃບຢັ້ງຢືນຖານະການເງິນທີ່ເໝາະສົມ;

16.6. ຮັບປະກັນມາດຕະຖານເຕັກນິກ;

16.7. ສໍາເນົາຂໍ້ຕົກລົງ ຫຼື ໜັງສືຢັ້ງຢືນ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ສໍາລັບອົງການຈັດຕັ້ງ;

16.8. ມີສໍາເນົາໃບອະນຸຍາດດໍາເນີນທຸລະກິດ, ໃບທະບຽນວິສະຫະກິດ ແລະ ທະບຽນອາກອນ.

### ມາດຕາ 17 ອາຍຸຂອງໃບອະນຸຍາດ

ໃບອະນຸຍາດນໍາໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວທຽມມີອາຍຸ ໜຶ່ງປີ ແລະ ສາມາດຕໍ່ໄດ້ຕາມອາຍຸໃບອະນຸຍາດດໍາເນີນທຸລະກິດດ້ານໂທລະຄົມມະນາຄົມແຕ່ລະປະເພດ.

ສໍາລັບວຽກງານສຸກເສີນ, ໄພພິບັດ, ຊ່ວຍເຫຼືອສັງຄົມ ແລະ ວຽກງານສະເພາະຂອງລັດຖະບານນັ້ນ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກໃບອະນຸຍາດນໍາໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວທຽມທີ່ມີອາຍຸຕໍ່າກ່ວາ ໜຶ່ງປີ ຕາມແຕ່ລະກໍລະນີ.

### ມາດຕາ 18 ການຕໍ່ອາຍຸໃບອະນຸຍາດ

ຜູ້ນໍາໃຊ້ການສື່ສານຜ່ານດາວທຽມ ສາມາດຂໍຕໍ່ອາຍຸໃບອະນຸຍາດພາຍໃນກໍານົດເວລາ ຫົກສິບວັນ ກ່ອນວັນໝົດອາຍຸນໍາໃຊ້.

ການຂໍຕໍ່ອາຍຸດັ່ງກ່າວຈະໄດ້ຮັບການພິຈາລະນາອະນຸຍາດກໍ່ຕໍ່ເມື່ອຜູ້ນໍາໃຊ້ໄດ້ປະຕິບັດດັ່ງນີ້:

18.1. ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບອະນຸຍາດ;

18.2. ປະຕິບັດພັນທະ ແລະ ເສຍຄ່າທໍານຽມຢ່າງຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວ ຂ້ອງ.

### ມາດຕາ 19 ການຖອນໃບອະນຸຍາດ

ຜູ້ນໍາໃຊ້ການສື່ສານຜ່ານດາວທຽມ ຈະຖືກຖອນ ໃບອະນຸຍາດ ໃນກໍລະນີໃດໜຶ່ງດັ່ງນີ້:

19.1. ບໍ່ເຄື່ອນໄຫວກິດຈະການຂອງຕົນພາຍໃນກໍານົດເວລາໜຶ່ງປີນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ;

19.2. ນໍາໃຊ້ບໍ່ຖືກຕ້ອງຕາມຈຸດປະສົງຂອງໃບອະນຸຍາດ;

19.3. ດໍາເນີນກິດຈະການບໍ່ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ;

19.4. ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບອະນຸຍາດ;

19.5. ບໍ່ປະຕິບັດພັນທະ ແລະ ບໍ່ເສຍຄ່າທໍານຽມຢ່າງຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວ ຂ້ອງ;

19.6. ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອອກແຈ້ງການ ການຖອນໃບອະນຸຍາດ ພ້ອມດ້ວຍເຫດຜົນເປັນລາຍລັກອັກສອນກ່ຽວກັບການຖອນໃບອະນຸຍາດນຳໃຊ້ດັ່ງກ່າວ.

## ໝວດທີ 4
## ສິດ ແລະ ໜ້າທີ່ຜູ້ໃຫ້ບໍລິການສື່ສານຜ່ານດາວທຽມ

### ມາດຕາ 20 ສິດຂອງຜູ້ໃຫ້ບໍລິການການສື່ສານຜ່ານດາວທຽມ

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ບໍລິການການສື່ສານດາວທຽມມີສິດ ດັ່ງນີ້:

20.1. ໄດ້ຮັບຜົນປະໂຫຍດຈາກການໃຫ້ບໍລິການການສື່ສານຜ່ານດາວທຽມ;

20.2. ນຳເຂົ້າ ແລະ ຕິດຕັ້ງອຸປະກອນສື່ສານຜ່ານດາວທຽມຕາມທີ່ໄດ້ຮັບອະນຸຍາດ;

20.3. ໂອນ ແລະ ໃຫ້ເຊົ່າສິດນຳໃຊ້ກິດຈະການການສື່ສານຜ່ານດາວທຽມຕາມທີ່ໄດ້ຮັບອະນຸຍາດ;

20.4. ໄດ້ຮັບການຕໍ່ອາຍຸນຳໃຊ້ ຫຼື ຍົກເລີກການນຳໃຊ້ການສື່ສານຜ່ານດາວທຽມ;

20.5. ໄດ້ຮັບສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 21 ໜ້າທີ່ຂອງຜູ້ໃຫ້ບໍລິການສື່ສານຜ່ານດາວທຽມ

ຜູ້ໃຫ້ບໍລິການສື່ສານຜ່ານດາວທຽມມີໜ້າທີ່ດັ່ງນີ້:

21.1. ໜ້າທີ່ພື້ນຕົ້ນ

21.1.1 ລາຍງານ ຫຼື ແຈ້ງຕໍ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນກໍລະນີມີຄື້ນລົບກວນ ຫຼື ມີການປ່ຽນແປງການນຳໃຊ້ຄື້ນຄວາມຖີ່ ແລະ ອຸປະກອນການສື່ສານຜ່ານດາວທຽມ;

21.1.2 ຮັບປະກັນການນຳໃຊ້ໃຫ້ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ບໍ່ລົບກວນການນຳໃຊ້ການສື່ສານຜ່ານດາວທຽມອື່ນ;

21.1.3 ຢູ່ພາຍໃຕ້ການກວດກາຂອງຂະແໜງການທີ່ກ່ຽວຂ້ອງ;

21.1.4 ປະຕິບັດລະບຽບການດ້ານບັນຊີການເງິນ, ສະຖິຕິ ແລະ ລະບອບລາຍງານ;

21.1.5 ເສັຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບກົດໝາຍ;

21.1.6 ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

21.2. ໜ້າທີ່ກ່ຽວກັບການປະສານງານຕຳແໜ່ງວົງໂຄຈອນ ແລະ ການນຳໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວທຽມດັ່ງນີ້:

21.2.1. ປະຕິບັດບັນດາລະບຽບການກ່ຽວກັບການຂຶ້ນທະບຽນ, ປະສານງານຄື້ນຄວາມຖີ່ກັບສາກົນ ຕາມຂໍ້ຕົກ ລົງສະບັບນີ້ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

21.2.2. ປະສານງານຄື້ນຄວາມຖີ່ດາວທຽມໂດຍກົງກັບຜູ້ນຳໃຊ້ຄື້ນຄວາມຖີ່ຂອງປະເທດອື່ນດັ່ງທີ່ໄດ້ ລະບຸໃນຂໍ້ 1 ຂອງມາດຕານີ້;

21.2.3. ເຂົ້າຮ່ວມການປະສານງານຕຳແໜ່ງວົງໂຄຈອນ ແລະ ການນຳໃຊ້ຄື້ນຄວາມຖີ່ດາວທຽມທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດຂຶ້ນຕາມແຈ້ງການຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

21.2.4. ເສຍຄ່າຂຶ້ນທະບຽນຕຳແໜ່ງວົງໂຄຈອນ ແລະ ຄື້ນຄວາມຖີ່ດາວທຽມຕາມລະບຽບຂອງ ສະຫະພາບໂທລະຄົມມະນາຄົມສາກົນ;

21.2.5. ປະຕິບັດຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນເພື່ອແກ້ໄຂບັນຫາ ສັນຍານລົບກວນທີ່ອາດກະທົບຕໍ່ການສື່ສານຜ່ານດາວທຽມອື່ນ.

21.3. ໜ້າທີ່ກ່ຽວກັບການນຳໃຊ້ຄື້ນຄວາມຖີ່ສະຖານີດາວທຽມພາກພື້ນດິນດັ່ງນີ້:

21.3.1. ປະຕິບັດບັນດາລະບຽບການປະສານງານຄື້ນຄວາມຖີ່ກັບສາກົນ;

21.3.2. ປະສານງານຄື້ນຄວາມຖີ່ຂອງສະຖານີດາວທຽມພາກພື້ນດິນໂດຍກົງກັບຜູ້ນຳໃຊ້ຄື້ນຄວາມຖີ່ ຂອງປະເທດອື່ນດັ່ງທີ່ໄດ້ລະບຸໃນຂໍ້ 1 ຂອງມາດຕານີ້;

21.3.3. ເຂົ້າຮ່ວມການປະສານງານຄື້ນຄວາມຖີ່ຂອງສະຖານີດາວທຽມພາກພື້ນດິນທີ່ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດຂຶ້ນຕາມແຈ້ງການຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

21.3.4. ເສັຍຄ່າຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ສະຖານີດາວທຽມພາກພື້ນດິນຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ;

21.3.5. ປະຕິບັດຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນເພື່ອແກ້ໄຂບັນຫາ ສັນຍານລົບກວນທີ່ອາດກະທົບຕໍ່ການສື່ສານຜ່ານດາວທຽມອື່ນ.

21.4. ຜູ້ໃຫ້ບໍລິການການສື່ສານຜ່ານດາວທຽມມີສິດປະສານງານກັບຜູ້ໃຫ້ບໍລິການອື່ນດັ່ງນີ້:

21.4.1. ປະສານງານຕຳແໜ່ງວົງໂຄຈອນ ແລະ ການນຳໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວທຽມໃນ ລະດັບຜູ້ໃຫ້ບໍລິການ;

21.4.2. ຜູ້ນຳໃຊ້ຕຳແໜ່ງວົງໂຄຈອນ ແລະ ຄື້ນຄວາມຖີ່ສື່ສານຜ່ານດາວທຽມສາມາດປະສານງານ ກັບຜູ້ນຳໃຊ້ຕຳແໜ່ງວົງໂຄຈອນ ແລະ ຄື້ນຄວາມຖີ່ສື່ສານຜ່ານດາວທຽມຂອງປະເທດອື່ນ ຕາມການອະນຸຍາດຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

21.4.3. ການປະສານງານຕຳແໜ່ງວົງໂຄຈອນ ແລະ ການນຳໃຊ້ຄື້ນຄວາມຖີ່ສື່ສານຜ່ານດາວທຽມ ຂອງປະເທດອື່ນຕ້ອງຮັບປະກັນຜົນປະໂຫຍດຂອງ ສປປ ລາວ ແລະ ສອດຄ່ອງກັບລະບຽບ ການຂອງສະຫະພາບໂທລະຄົມມະນາຄົມສາກົນ;

21.4.4. ຜົນການປະສານງານຕຳແໜ່ງວົງໂຄຈອນ ແລະ ການນຳໃຊ້ຄື້ນຄວາມຖີ່ສຳລັບດາວທຽມມີ ຜົນສັກສິດນັບແຕ່ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຮອງ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 22 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການການສື່ສານຜ່ານດາວທຽມ

ຫ້າມຜູ້ທີ່ໄດ້ຮັບອະນຸຍາດໃຫ້ບໍລິການການສື່ສານຜ່ານດາວທຽມ ມີພຶດຕິກຳ ດັ່ງນີ້:

22.1. ນຳໃຊ້ການສື່ສານຜ່ານດາວທຽມລົບກວນ, ສ້າງຄວາມເສຍຫາຍ ຕໍ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;

22.2. ໂອນ, ຂາຍ ແລະ ໃຫ້ເຊົ່າສິດນຳໃຊ້ການສື່ສານຜ່ານດາວທຽມ (ໃບອະນຸຍາດ) ໂດຍບໍ່ໄດ້ຮັບອະນຸຍາດ;

22.3. ນຳເຂົ້າ, ຜະລິດ ແລະ ຈຳໜ່າຍ ອຸປະກອນກ່ຽວກັບການສື່ສານຜ່ານດາວທຽມ ໂດຍບໍ່ໄດ້ຮັບອະນຸຍາດ;

22.4. ນຳໃຊ້ການສື່ສານຜ່ານດາວທຽມເຂົ້າໃນຈຸດປະສົງອື່ນທີ່ບໍ່ໄດ້ກຳນົດໄວ້ໃນໃບອະນຸຍາດ;

22.5. ນຳໃຊ້ການສື່ສານຜ່ານດາວທຽມເກີນຂອບເຂດທີ່ໄດ້ຮັບອະນຸຍາດ;

22.6. ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ກວດກາການສື່ສານຜ່ານດາວທຽມ;

22.7. ຕິດຕັ້ງອຸປະກອນສື່ສານຜ່ານດາວທຽມ ໂດຍບໍ່ໄດ້ຮັບອະນຸຍາດ;

22.8. ນຳໃຊ້ການສື່ສານຜ່ານດາວທຽມໂດຍບໍ່ຖືກຕ້ອງຕາມນະໂຍບາຍລວມສູນການສື່ສານຜ່ານສູນອິນເຕີເນັດແຫ່ງຊາດ;

22.9. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 23 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນທີ່ນຳໃຊ້ການສື່ສານຜ່ານດາວທຽມມີພຶດຕິກຳ ດັ່ງນີ້:

23.1. ນຳໃຊ້ການສື່ສານຜ່ານດາວທຽມ ໂດຍບໍ່ໄດ້ຮັບອະນຸຍາດ;

23.2. ໂອນ, ຂາຍ ແລະ ໃຫ້ເຊົ່າສິດນຳໃຊ້ການສື່ສານຜ່ານດາວທຽມ(ໃບອະນຸຍາດ) ໂດຍບໍ່ໄດ້ຮັບອະນຸຍາດ;

23.3. ນຳເຂົ້າ, ຜະລິດ ແລະ ຈຳໜ່າຍ ອຸປະກອນກ່ຽວກັບການສື່ສານຜ່ານດາວທຽມ ໂດຍບໍ່ໄດ້ຮັບອະນຸຍາດ;

23.4. ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ກວດກາການສື່ສານຜ່ານດາວທຽມ;

23.5. ຕິດຕັ້ງອຸປະກອນສື່ສານຜ່ານດາວທຽມ ໂດຍບໍ່ໄດ້ຮັບອະນຸຍາດ;

23.6. ນຳໃຊ້ການສື່ສານຜ່ານດາວທຽມໂດຍບໍ່ຖືກຕ້ອງຕາມນະໂຍບາຍລວມສູນການສື່ສານຜ່ານສູນອິນເຕີເນັດແຫ່ງຊາດ;

23.7. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 6
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ ລວມທັງໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

**ມາດຕາ 25 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

25.1. ນຳໃຊ້ການສື່ສານຜ່ານດາວທຽມ ໂດຍບໍ່ໄດ້ຮັບອະນຸຍາດ;

25.2. ນຳໃຊ້ການສື່ສານຜ່ານດາວທຽມ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ;

25.3. ນຳໃຊ້ການສື່ສານຜ່ານດາວທຽມບໍ່ຖືກຕາມເປົ້າໝາຍ;

25.4. ໂອນ, ຂາຍ ແລະ ໃຫ້ເຊົ່າສິດນຳໃຊ້ກິດຈະການການສື່ສານຜ່ານດາວທຽມໂດຍບໍ່ໄດ້ຮັບອະນຸຍາດ;

25.5. ນຳເຂົ້າ, ຜະລິດ ແລະ ຈຳໜ່າຍ ອຸປະກອນກ່ຽວກັບການສື່ສານຜ່ານດາວທຽມ ໂດຍບໍ່ໄດ້ຮັບອະນຸຍາດ;

25.6. ລະເມີດມາດຕາໃດໜຶ່ງຂອງຂໍ້ຕົກລົງສະບັບນີ້;

25.7. ບໍ່ເສັຍຄ່ານຳໃຊ້ຕຳແໜ່ງວົງໂຄຈອນດາວທຽມ, ຄື້ນຄວາມຖີ່ສື່ສານຜ່ານດາວທຽມຕາມເວລາທີ່ກຳນົດໄວ້ໃນໃບແຈ້ງຊຳລະເງິນປະຈຳປີ;

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດມາດຕາໃດໜຶ່ງຂອງຂໍ້ຕົກລົງສະບັບນີ້ເປັນຄັ້ງທຳອິດ ຈະຖືກກ່າວເຕືອນ ພ້ອມທັງເສຍຄ່ານຳໃຊ້ຄື້ນຄວາມຖີ່, ບັນທຶກໄວ້ໃນສຳນວນເອກະສານ, ສຶກສາອົບຮົມ ແລະ ອາຍັດເຄື່ອງອຸປະກອນນຳເຂົ້າທັງໝົດ. ໃນກໍລະນີມີຄັ້ງຕໍ່ໄປ ຈະຖືກປັບໃໝດັ່ງຕໍ່ໄປນີ້:

25.1. ຄັ້ງທີ 2 ປັບໃໝ 20 % ຂອງມູນຄ່າທັງໝົດຂອງຄ່ານຳໃຊ້ຄື້ນຄວາມຖີ່ ແລະ ມູນຄ່າອຸປະກອນນຳ ເຂົ້າທັງໝົດພ້ອມທັງເສຍຄ່ານຳໃຊ້ຄື້ນຄວາມຖີ່ຕໍ່ 1 ສະຖານີຕໍ່ຄັ້ງ ແລະ ອາຍັດເຄື່ອງອຸປະກອນນຳເຂົ້າທັງໝົດ;

25.2. ຄັ້ງທີ 3 ປັບໃໝ 50 % ຂອງມູນຄ່າທັງໝົດຂອງຄ່ານຳໃຊ້ຄື້ນຄວາມຖີ່ ແລະ ມູນຄ່າອຸປະກອນນຳ ເຂົ້າທັງໝົດພ້ອມທັງເສຍຄ່ານຳໃຊ້ຄື້ນຄວາມຖີ່ຕໍ່ 1 ສະຖານີຕໍ່ຄັ້ງ ແລະ ອາຍັດເຄື່ອງອຸປະກອນນຳເຂົ້າທັງໝົດ;

25.3. ຄັ້ງທີ 4 ປັບໃໝ 100 % ຂອງມູນຄ່າທັງໝົດຂອງຄ່ານຳໃຊ້ຄື້ນຄວາມຖີ່ ແລະ ມູນຄ່າອຸປະກອນນຳ ເຂົ້າທັງໝົດພ້ອມທັງເສຍຄ່ານຳໃຊ້ຄື້ນຄວາມຖີ່ຕໍ່ 1 ສະຖານີຕໍ່ຄັ້ງ ແລະ ອາຍັດເຄື່ອງອຸປະກອນນຳເຂົ້າທັງໝົດ;

ຄ່າປັບໃໝ ແມ່ນມອບເຂົ້າງົບປະມານແຫ່ງຊາດຕາມລະບຽບການ.

ໝວດທີ 7

ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມໂທລະຄົມມະນາຄົມ ຈັດຕັ້ງປະຕິບັດຄຸ້ມຄອງການນຳໃຊ້ຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ລັດຖະມົນຕີ

ດຣ. ທັນສະໄໝ ກົມມະສິດ